# ບົດຂ່າວ

## ກອງປະຊຸມຄະນະບໍລິຫານ ປິດໂຄງການສົ່ງເສີມການມີສ່ວນຮ່ວມຂອງປະຊາຊົນຜ່ານວິທະຍຸຊຸມຊົນ



*ຊາວບ້ານທີ່ໄດ້ຮັບຂໍ້ມູນຂ່າວສື່ສານຈາກວິທະຍຸກະຈາຍສຽງເພື່ອຊຸມຊົນຂອງເຮົາ*

ອົງການສະຫະປະຊາຊາດເພື່ອການພັດທະນາ ມີການພົວພັນທີ່ຮັດແໜ້ນກັບລັດຖະບານແຫ່ງ ສປປ ລາວ ມາເປັນເວລາຫລາຍກວ່າ 20 ປີ. ເພື່ອເປັນການສະເຫລີມສະຫລອງວັນວິທະຍຸໂລກ ພວກເຮົາມີຄວາມຍິນດີເຜີຍແຜ່ກ່ຽວກັບຄວາມສຳເລັດຂອງໂຄງການສົ່ງເສີມການມີສ່ວນຮ່ວມຂອງປະຊາຊົນຜ່ານວິທະຍຸຊຸມຊົນ (ສສປວ) ຊຶ່ງເປັນໜຶ່ງໃນໂຄງການທີ່ພົ້ນເດັ່ນຂອງອົງການສະຫະປະຊາຊາດເພື່ອການພັດທະນາ ໂດຍປະຕິບັດຕາມຄຳຂວັນ ກໍຄືໜ້າທີ່ ‘ພວກເຮົາພ້ອມກັນກ້າວໄປ’ ແລະ ສົ່ງເສີມ ການມີສ່ວນຮ່ວມຂອງໝົດທຸກຄົນ ຊຶ່ງໂຄງການວິທະຍຸຊຸມຊົນໄດ້ຮັບປະກັນການເຂົ້າເຖິງຂໍ້ມູນຂ່າວສານຂອງປະຊາຊົນລາວທີ່ອາໄສຢູ່ເຂດຫ່າງໄກສອກຫຼີກ ຜ່ານພາສາທ້ອງຖິ່ນຕາມແຕ່ລະທ້ອງຖິ່ນ ໃນ ສປປ ລາວ.

ບໍ່ວ່າຈະເປັນບົດເພງ, ຂ່າວສານ, ຫຼາກຫຼາຍຄວາມຮູ້ໃໝ່ໆ ແລະ ເລື່ອງເລົ່າເກົ່າໆ, ສະຖານີວິທະຍຸທ້ອງຖິ່ນ ແມ່ນຫົວໃຈຂອງຊຸມຊົນ.

ໃນຄັ້ງວັນທີ 7 ກຸມພາ 2023 ທີ່ຜ່ານມາ ຄະນະບໍລິຫານໂຄງການໄດ້ພົບປະເພື່ອລາຍງານຜົນສຳເລັດຂອງໂຄງການ ແລະ ສິ່ງທ້າທາຍທີ່ໂຄງການໄດ້ພົບພໍ້ເພື່ອສະຫຼຸບແລກປ່ຽນ ແລະ ປິດໂຄງການດັ່ງກ່າວ. ສະຖານີວິທະຍຸຊຸມຊົນແຫ່ງທຳອິດພາຍໃຕ້ໂຄງການ ສສປວ ໄດ້ຖືກສ້າງຂຶ້ນໃນປີ 2007 ຢູ່ທີ່ເມືອງຄູນ ແຂວງຊຽງຂວາງ. ມາເຖິງປັດຈຸບັນສະຖານີວິທະຍຸຊຸມຊົນແຫ່ງທຳອິດແມ່ນໄດ້ຂະຫຍາຍຫຼາຍຂຶ້ນ ເປັນ ຈຳນວນ 12 ສະຖານີວິທະຍຸຊຸມຊົນຢູ່ໃນ 6 ແຂວງ. ໃນນີ້ປະກອບມີ: ສະຖານີວິທະຍຸຊຸມຊົນ ເມືອງຄູນ ແລະ ເມືອງໜອງແຮດ ແຂວງຊຽງຂວາງ, ສະຖານີວິທະຍຸຊຸມຊົນເມືອງນາກາຍ ແລະ ເມືອງມະຫາໄຊ ແຂວງຄຳມ່ວນ, ສະຖານີວິທະຍຸຊຸມຊົນເມືອງນາໝໍ້ ແລະ ເມືອງຮຸນ ແຂວງອຸດົມໄຊ, ສະຖານີວິທະຍຸຊຸມຊົນເມືອງຄອບ ແຂວງໄຊຍະບູລີ, ສະຖານີວິທະຍຸຊຸມຊົນເມືອງຕະໂອ້ຍ ແລະ ເມືອງລະຄອນເພັງ ແຂວງສາລະວັນ, ສະຖານີວິທະຍຸຊຸມຊົນເມືອງທ່າແຕງ ແລະ ເມືອງດັກຈຶງ ແຂວງເຊກອງ ແລະ ສະຖານີວິທະຍຸຊຸມຊົນເມືອງຊອນ ແຂວງຫົວພັນ.

ໂຄງການ ສສປວ ໄດ້ໃຫ້ການສະໜັບສະໜູນແກ່ຊຸມຊົນໃນ 12 ເມືອງ ໂດຍປະກອບມີການສ້າງຕັ້ງ ສະຖານີວິທະຍຸ, ການຝຶກອົບຮົມພະນັກງານ ແລະ ອາສາສະໝັກທ້ອງຖິ່ນ ແລະ ການເປັນຂົວຕໍ່ລະຫວ່າງ ບັນດາເມືອງ ກັບ ຄູ່ຮ່ວມພັດທະນາກ່ຽວກັບການສະໜອງຂໍ້ມູນຈຳເປັນ ແລະ ກ່ຽວຂ້ອງຕໍ່ກັບການພັດທະນາຊຸມຊົນ. ບັນດາຫົວຂໍ້ທີ່ໄດ້ນຳສະເໜີຢູ່ບັນດາສະຖານີຊຸມຊົນປະກອບມີຫຼາກຫຼາຍຫົວຂໍ້ເປັນຕົ້ນ ການສຶກສາຂອງເດັກຍິງສະໜັບສະໜູນໂດຍອົງການອຸຍເນສໂກ (UNESCO), ການຕໍ່ຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ສະໜັບສະໜູນໂດຍ ອົງການ KOICA, ການເຄື່ອນຍ້າຍຖິ່ນຖານໃນໄລຍະການລະບາດຂອງພະຍາດໂຄວິດ-19 ສະໜັບສະໜູນໂດຍອົງການສາກົນເພື່ອການເຄື່ອນຍ້າຍຖິ່ນຖານ (IOM). ສະຖານີວິທະຍຸຊຸມຊົນໄດ້ນຳເອົາຜົນປະໂຫຍດກ່ຽວກັບການເຂົ້າເຖິງຂໍ້ມູນຂອງຊຸມຊົນຢູ່ເຂດຫ່າງໄກສອກຫຼີກ ແລະ ຍັງມີຄວາມສຳຄັນຕໍ່ກັບຊີວິດປະຈຳວັນຂອງພວກເຂົາ ແລະ ຈະຍັງຄົງສືບຕໍ່ມີຄວາມສຳຄັນຕໍ່ໄປອີກໃນອະນາຄົດ.

ກອງປະຊຸມຄະນະບໍລິຫານໄດ້ສະຫຼຸບສັງລວມການປິດໂຄງການ ສສປວ ຢ່າງເປັນທາງການ ໃນວັນທີ 7 ກຸມພາ ໂດຍເປັນເອກະພາບເຫັນດີແຜນການຕໍ່ໜ້າກ່ຽວກັບການຄົ້ນຄວ້າໂອກາດໃນການສ້າງໂຄງການໄລຍະໃໝ່ເພື່ອໃຫ້ສະຖານີວິທະຍຸຊຸມຊົນມີຄວາມຍືນຍົງໃນ ສປປ ລາວ. ໂຄງການໄດ້ຮັບທຶນສະໜັບສະໜູນທັງໝົດເປັນຈຳນວນເກືອບ 1,2 ລ້ານໂດລາສະຫະລັດ ໃນໄລຍະປີ 2017-2022 ທີ່ຜ່ານມາໂດຍໄດ້ຮັບທຶນຊ່ວຍເຫຼືອຈາກຫຼາກຫຼາຍຄູ່ຮ່ວມງານເຊັ່ນ ບັນດາອົງການໃນເຄືອຂອງອົງການສະຫະປະຊາຊາດ ແລະ ພາກເອກະຊົນເຊັ່ນ ບໍລິສັດເຂື່ອນໄຟຟ້ານໍ້າເທີນ 2.

**ສຳລັບຂໍ້ມູນເພີ່ມເຕີມ, ກະລຸນາຕິດຕໍ່:**

ທ່ານ ນາງ ອັກສອນທິບ ສົມວໍລະຈິດ
ຫົວໜ້າໜ່ວຍງານການສື່ສານຂອງ UNDP

aksonethip.somvorachit@undp.org

ທ່ານ ນາງ ສິນສະຫວັນ ສອນປະເສີດ

ພະນັກງານສື່ສານ ແລະ ປະຊາສຳພັນພະແນກການປົກຄອງ UNDP

sinsavanh.sonepaseuth@undp.org